# ຂໍ້ມູນສໍາລັບຜູ້ທີ່ໄດ້ຮັບຄໍາສັ່ງສານວ່າເປັນຜູ້ກະທໍາການໃຊ້ຄວາມຮຸນແຮງໃນຄອບຄົວ

**ທ່ານຕ້ອງປະຕິບັດຕາມຄໍາສັ່ງ, ຖ້າບໍ່ດັ່ງນັ້ນ ທ່ານຈະຖືກຈັບ ແລະ ຖືກຕັ້ງຂໍ້ຫາອາຊະຍາກໍາ**

ກະລຸນາປະຕິບັດຕາມຄໍາສັ່ງ, ເຖິງແມ່ນວ່າ:

- ຜູ້ສະເໜີຄໍາຮ້ອງຈະບອກກັບທ່ານບໍ່ໃຫ້ປະຕິບັດຕາມຄໍາສັ່ງສານ ແລະ ຕ້ອງການຈະຕິດຕໍ່ກັບທ່ານ;
- ຜູ້ສະເໜີຄໍາຮ້ອງຈະຕົວະ ເພື່ອໃຫ້ໄດ້ຮັບຄໍາສັ່ງສານເພື່ອຄຸ້ມຄອງ;
- ສານເຮັດຜິດພາດໃນການອອກຄໍາສັ່ງສານເພື່ອຄຸ້ມຄອງ, ຫຼື
- ທ່ານເປັນເຫຍື່ອໃນຄວາມຮຸນແຮງພາຍໃນຄອບຄົວ.

ຖ້າທ່ານຕ້ອງການຍື່ນຂໍຄໍາສັ່ງສານເພື່ອຄຸ້ມຄອງຕໍ່ທ່ານເອງ, ກະລຸນາອ່ານຂໍ້ຄວນປະຕິບັດ: ວິທີການຍື່ນຂໍຄໍາສັ່ງສານເພື່ອປົກປ້ອງຄວາມຮຸນແຮງພາຍໃນຄອບຄົວ (ແບບຟອມ DV-150), ສາມາດດາວໂຫຼດໄດ້ທີ່: ak-courts.info/dv150.

ຂໍ້ມູນເພີ່ມເຕີມທີ່: ak-courts.info/pub23

ຫາກທ່ານມີຄໍາຖາມ ຫຼື ຕ້ອງການນາຍພາສາແປ, ກະລຸນາຕິດຕໍ່ປະສານຫາ ສານທ້ອງຖິ່ນທີ່ທ່ານອາໄສຢູ່.

## ຄໍາສັ່ງສານເພື່ອຄຸ້ມຄອງຈາກຄວາມຮຸນແຮງພາຍໃນຄອບຄົວ ແມ່ນຫຍັງ?

ຄໍາສັ່ງຄຸ້ມຄອງນີ້ແມ່ນເຊັນໂດຍຜູ້ພິພາກສາ ແລະ ມີສິດອໍານາດໃນການສັ່ງໃຫ້ທ່ານກະທໍາ ຫຼື ບໍ່ກະທໍາການຢ່າງໃດຢ່າງໜຶ່ງ. ຕົວຢ່າງ, ຄໍາສັ່ງຄຸ້ມຄອງໂດຍທົ່ວໄປແລ້ວສາມາດສັ່ງໃຫ້ບຸກຄົນໜຶ່ງ ຢູ່ຫ່າງຈາກອີກບຸກຄົນໜຶ່ງ ແລະ ຫ້າມບໍ່ໃຫ້ຕິດຕໍ່ພົວພັນກັບພວກເຂົາເຈົ້າ.

ການສະເໜີຂໍໃຫ້ມີຄໍາສັ່ງສານເພື່ອຄຸ້ມຄອງນີ້ **ບໍ່ແມ່ນ**ການລາຍງານອາຊະຍາກໍາຕໍ່ຕໍາຫຼວດ, ແຕ່ຄໍາສັ່ງຄຸ້ມຄອງແມ່ນຄະດີແພ່ງ.

ຖ້າທ່ານມີຄໍາສັ່ງສານເພື່ອຄຸ້ມຄອງທີ່ຕິດພັນກັບຄະດີອາຍາ ກໍສາມາດນັບເປັນຄະດີອາຍາໄດ້, ເມື່ອທ່ານຍັງບໍ່ທັນໄດ້ຮັບຄໍາສັ່ງຫຍັງຈາກຄະດີອາຍາທີ່ທ່ານຖືກຮ້ອງຟ້ອງ, ທ່ານຈະຕ້ອງປະຕິບັດຕາມຄໍາສັ່ງສານເພື່ອຄຸ້ມຄອງ **ທັງທາງແພ່ງ ແລະ ອາຍາ.** ຖ້າຄໍາສັ່ງໜຶ່ງມີຄໍາສັ່ງຫ້າມຫຼາຍກວ່າອີກຄໍາສັ່ງໜຶ່ງ, ກະລຸນາປະຕິບັດຕາມຄໍາສັ່ງທີ່ມີຂໍ້ຫ້າມຫຼາຍທີ່ສຸດ. **ຫ້າມຕິດຕໍ່ພົວພັນຫາຜູ້ສະເໜີຄໍາຮ້ອງ ເວັ້ນເສຍແຕ່ບໍ່ມີຄໍາສັ່ງອື່ນອີກ.**

## ມີຫຍັງແດ່ ທີ່ຂ້າພະເຈົ້າຈໍາເປັນຕ້ອງຮູ້?

**ຜູ້ສະເໜີຄໍາຮ້ອງ** ໝາຍເຖິງ ບຸກຄົນທີ່ຂໍຄໍາສັ່ງຈາກສານເພື່ອຄຸ້ມຄອງ. ພໍ່-ແມ່ ຫຼື ຜູ້ປົກຄອງທີ່ຖືກຕ້ອງຕາມກົດໝາຍ ສາມາດຍື່ນຄໍາຮ້ອງໃນນາມເດັກ, ສ່ວນຜູ້ປົກຄອງທີ່ຖືກຕ້ອງຕາມກົດໝາຍ ກໍສາມາດຍື່ນຄໍາຮ້ອງໃນນາມຜູ້ໃຫຍ່ທີ່ບໍ່ສາມາດດູແລຕົນເອງໄດ້.

**ຜູ້ຖືກກ່າວຫາ** ໝາຍເຖິງ ບຸກຄົນທີ່ສານຂໍໃຫ້ປົກປ້ອງຄວາມຮຸນແຮງຈາກບຸກຄົນນີ້. ຖ້າຫາກທ່ານໄດ້ຮັບຄໍາສັ່ງສານເພື່ອຄຸ້ມຄອງທ່ານ ກໍໝາຍຄວາມວ່າທ່ານແມ່ນຜູ້ຖືກກ່າວຫາ.

**ໜັງສືຄໍາຮ້ອງ** ໝາຍເຖິງ ເອກະສານຄໍາຮ້ອງຂໍການຄຸ້ມຄອງທີ່ຜູ້ສະເໜີຄໍາຮ້ອງຍື່ນຕໍ່ສານ, ເຊິ່ງຈະໄດ້ອະທິບາຍລະອຽດວ່າເປັນຫຍັງຜູ້ສະເໜີຄໍາຮ້ອງ ຈຶ່ງຕ້ອງການໄດ້ຮັບການຄຸ້ມຄອງ.

## ຄຳສັ່ງສານເພື່ອຄຸ້ມຄອງຈາກຄວາມຮຸນແຮງພາຍໃນຄອບຄົວ ມີປະເພດໃດແດ່?

**ຄຳສັ່ງສານເພື່ອຄຸ້ມຄອງໄລຍະສັ້ນ** (ຫຼືເອີ້ນວ່າຄຳສັ່ງຄຸ້ມຄອງທີ່ອອກໃຫ້ກັບຜູ້ທີ່ຂໍພຽງຝ່າຍດຽວ) ມີໄລຍະຄຸ້ມຄອງສູງສຸດ 20 ວັນ. ສານສາມາດເພີ່ມໄລຍະຄຸ້ມຄອງອອກໄປອີກ 20 ວັນ ຖ້າຫາກວ່າ: (1) ທ່ານບໍ່ໄດ້ຮັບສຳເນົາຄຳສັ່ງພາຍໃນ 20 ວັນທຳອິດ ແລະ ຜູ້ບັງຄັບໃຊ້ກົດໝາຍຕ້ອງໃຊ້ເວລາໃນການມອບຄຳສັ່ງໃຫ້ແກ່ທ່ານ; ຫຼື (2) ທ່ານເຫັນດີໃນການເພີ່ມໄລຍະເວລາຄຸ້ມຄອງ; ຫຼື (3) ສານມີຄຳອະທິບາຍທີ່ມີເຫດຜົນພຽງພໍໃນການເພີ່ມໄລຍະເວລາຄຸ້ມຄອງ ພາຍຫຼັງທີ່ຮັບຟັງຄຳໃຫ້ການທັງຈາກທ່ານ ແລະ ຜູ້ສະເໜີຄຳຮ້ອງ. ຄຳສັ່ງສານເພື່ອຄຸ້ມຄອງຂອງສານ ແມ່ນອີງໃສ່ຂໍ້ມູນທີ່ໄດ້ຈາກໃບຄຳຮ້ອງ ແລະ ການຟັງຄຳໃຫ້ການຂອງຜູ້ສະເໜີຄຳຮ້ອງ.

**ຄຳສັ່ງສານເພື່ອຄຸ້ມຄອງໄລຍະຍາວ** ມີໄລຍະຄຸ້ມຄອງສູງສຸດ 1 ປີ. ສານສາມາດອອກຄຳສັ່ງສານເພື່ອຄຸ້ມຄອງໄລຍະຍາວ ພາຍຫຼັງຈາກການຮັບຟັງຄຳໃຫ້ການໃນສານເທົ່ານັ້ນ. ທ່ານຈະຕ້ອງຖືກແຈ້ງໃຫ້ຊາບກ່ຽວກັບການມາຂຶ້ນສານພາຍໃນເວລາ 10 ວັນ ແລະ ທ່ານຍັງຈະໄດ້ຮັບໂອກາດໃນການຂຶ້ນໃຫ້ການໂຕ້ສອນ ເພື່ອອະທິບາຍໃນມຸມມອງທ່ານເອງອີກດ້ວຍ. ນອກຈາກນີ້, ສານສາມາດອອກຄຳສັ່ງສານເພື່ອຄຸ້ມຄອງຈາກທ່ານໄດ້ ເຖິງແມ່ນວ່າທ່ານບໍ່ໄດ້ໄປຂຶ້ນສານກໍຕາມ. ສ່ວນຜູ້ບັງຄັບໃຊ້ກົດໝາຍກໍມີໜ້າທີ່ແຈ້ງໃຫ້ທ່ານຊາບກ່ຽວກັບຜົນການຮັບຟັງຂອງສານ.

**ຄຳສັ່ງສານເພື່ອຄຸ້ມຄອງທັງໄລຍະສັ້ນ ແລະ ໄລຍະຍາວ** ຖ້າຫາກຜູ້ສະເໜີຄຳຮ້ອງ ຮ້ອງຂໍໃຫ້ມີຄຳສັ່ງສານເພື່ອຄຸ້ມຄອງທັງໄລຍະສັ້ນ ແລະ ໄລຍະຍາວ, ສານຈະກວດກາຄຳຮ້ອງໃນວັນດຽວກັນກັບທີ່ຍື່ນເອກະສານ ແລະ ຈະຕັດສິນໃຈວ່າ ຈະອອກຄຳສັ່ງສານເພື່ອຄຸ້ມຄອງໄລຍະສັ້ນໃຫ້ ຫຼື ບໍ່. ຖ້າຫາກສານອອກຄຳສັ່ງສານເພື່ອຄຸ້ມຄອງໄລຍະສັ້ນ, ສານຈະແຈ້ງເວລາໃນການມາຂຶ້ນສານ ພາຍໃນໄລຍະເວລາ 2-3 ອາທິດ ເພື່ອຕັດສິນວ່າຈະອອກຄຳສັ່ງສານເພື່ອຄຸ້ມຄອງໄລຍະຍາວໃຫ້ ຫຼື ບໍ່ (ກະລຸນາອ່ານຫຍໍ້ໜ້າທາງເທິງ). ຫາກສານປະຕິເສດການອອກຄຳສັ່ງສານເພື່ອຄຸ້ມຄອງໄລຍະສັ້ນ, ສານອາດຈະອອກ ຫຼື ບໍ່ອອກຕາຕະລາງຂຶ້ນສານ ເພື່ອຕັດສິນການອອກຄຳສັ່ງສານເພື່ອຄຸ້ມຄອງໄລຍະຍາວ.

**ໝາຍເຫດ:** ປະເພດຄຳສັ່ງທີ່ເອີ້ນວ່າ **ຄຳສັ່ງສານເພື່ອຄຸ້ມຄອງແບບເລັ່ງດ່ວນ** ມີຜົນບັງຄັບໃຊ້ພາຍໃນໄລຍະເວລາ 72 ຊົ່ວໂມງ, ເຊິ່ງມີແຕ່ ຜູ້ບັງຄັບໃຊ້ກົດໝາຍ ທີ່ສາມາດອອກຄຳສັ່ງນີ້ໄດ້ ໂດຍຈະອີງໃສ່ການບອກເລົ່າລາຍລະອຽດຂອງຜູ້ສະເໜີຄຳຮ້ອງ ຕໍ່ຜູ້ບັງຄັບໃຊ້ກົດໝາຍ, ແຕ່ຜູ້ສະເໜີຄຳຮ້ອງ ແລະ ຜູ້ບັງຄັບໃຊ້ກົດໝາຍ ບໍ່ສາມາດເພີ່ມໄລຍະເວລາໃນການອອກຄຳສັ່ງສານເພື່ອຄຸ້ມຄອງເກີນກວ່າ 72 ຊົ່ວໂມງໄດ້, ທ່ານຈະຕ້ອງໄດ້ຕ້ອງປະຕິບັດຕາມຄຳສັ່ງສານເພື່ອຄຸ້ມຄອງຈາກສານເທົ່ານັ້ນ (ຄຳສັ່ງປະເພດນີ້ ແມ່ນມີໜ້ອຍ ແລະ ບໍ່ມີລາຍລະອຽດລົງເລິກຄັດຕິດໃນເອກະສານສະບັບນີ້).

## ຜູ້ສະເໜີຄຳຮ້ອງ ຈະຕ້ອງເຮັດແນວໃດເພື່ອຢັ້ງຢືນໃຫ້ໄດ້ຮັບການຄຸ້ມຄອງ?

ຜູ້ສະເໜີຄຳຮ້ອງ ຈະຕ້ອງໃຊ້ 2 ຢ່າງ ໃນການຢືນຢັນສິດໃນການໄດ້ຮັບການຄຸ້ມຄອງຈາກ "ຄວາມຮຸນແຮງພາຍໃນຄອບຄົວ" ຄືດັ່ງນີ້:

1. ຜູ້ສະເໜີຄຳຮ້ອງຕ້ອງມີຄວາມ**ສຳພັນ**ພິເສດກັບທ່ ານ, ເຊິ່ ງໃນທາງກົດໝາຍເອີ້ນວ່ າ ເປັນສະມາຊິກໃນຄອບຄົວ ແລະ ບໍ່ຈຳເປັນຈະຕ້ອງຢູ່ ກິນນຳກັນ (ສາມາດອ່ ານ ລາຍລະອຽດກ່ ຽວກັບສາຍສຳພັນທີ່ ໜ້າທີ 6).
2. ທ່ານຖືກຕັ້ງຂໍ້ຫາທາງ**ອາຊະຍະກຳ**ຕໍ່ຜູ້ສະເໜີຄຳຮ້ອງ. ມີບາງຄະດີທາງອາຊະຍາກຳ (ໃນທາງກົດໝາຍເອີ້ນວ່າ ອາຊະຍາກຳທາງຄວາມຮຸນແຮງພາຍໃນຄອບຄົວ) ມີສິດໃນການໄດ້ຮັບການຄຸ້ມຄອງຈາກຄວາມຮຸນແຮງພາຍໃນຄອບຄົວ. ສານຈະຕັດສິນວ່າ ເປັນຄະດີອາຊະຍາກຳ ໂດຍອີງໃສ່ຄຳໃຫ້ການຂອງຜູ້ສະເໜີຄຳຮ້ອງ (ລາຍລະອຽດຂອງຄະດີອາຊະກຳຄວາມຮຸນແຮງພາຍໃນຄອບຄົວ ຄັດຕິດໃນທ້າຍເອກະສານສະບັບນີ້).

## ຂ້າພະເຈົ້າຈະຮູ້ໄດ້ແນວໃດວ່າໃຜໄດ້ຮັບຄຳສັ່ງຄຸ້ມຄອງໄລຍະສັ້ນ ຫຼື ໄລຍະຍາວ ທີ່ຈະປົກປ້ອງຜູ້ກ່ຽວຈາກຂ້າພະເຈົ້າ?

ຖ້າສານອອກຄຳສັ່ງສານເພື່ອຄຸ້ມຄອງໄລຍະສັ້ນ, ຜູ້ບັງຄັບໃຊ້ທາງກົດໝາຍ (ຕຳຫຼວດທ້ອງຖິ່ນ, ຕຳຫຼວດລັດ, ເຈົ້າໜ້າທີ່ປ້ອງກັນຄວາມສະຫງົບບ້ານ ແລະ ອື່ນໆ) ຈະຕ້ອງມອບສຳເນົາຄຳສັ່ງໃຫ້ແກ່ທ່ານ ພ້ອມທັງອະທິບາຍລະອຽດ, ເຊິ່ງເອີ້ນວ່າ "ການສົ່ງມອບເອກະສານ". ກະລຸນາອ່ານ ແລະ ປະຕິບັດຕາມຄຳສັ່ງໃນໃບຄຳສັ່ງ, ຫາກບໍ່ດັ່ງນັ້ນ ທ່ານຈະຖືກຈັບ ແລະ ຕັ້ງຂໍ້ຫາກໍ່ອາຊະຍາກຳ.

ຖ້າຫາກສານຈັດຕາຕະລາງຂຶ້ນສານ ເພື່ອຮັບຟັງຄຳສັ່ງສານເພື່ອຄຸ້ມຄອງໄລຍະຍາວ, ຜູ້ບັງຄັບໃຊ້ທາງກົດໝາຍ ຈະຕ້ອງ:

- ມອບສຳເນົາໃບຄຳຮ້ອງຂອງຜູ້ສະເໜີຄຳຮ້ອງ, ເຊິ່ງຈະຊ່ວຍໃຫ້ທ່ານເຂົ້າໃຈໃນສິ່ງທີ່ຜູ້ສະເໜີຄຳຮ້ອງໃຫ້ການ ແລະ ສາມາດກະກຽມການຂຶ້ນຮັບຟັງຄຳສັ່ງສານເພື່ອຄຸ້ມຄອງໄລຍະຍາວໄດ້.
- ມອບໃບແຈ້ງການທີ່ປະກອບດ້ວຍ ວັນ.ເດືອນ.ປີ, ເວລາ ແລະ ສະຖານທີ່ ໃນການຂຶ້ນສານຄັ້ງຕໍ່ໄປ. ໃບແຈ້ງການນີ້ ອາດຈະເປັນເອກະສານດຽວກັນກັບຄຳສັ່ງສານເພື່ອຄຸ້ມຄອງ ຫຼື ອາດຈະແຍກເປັນເອກະສານໃໝ່ລາວ. ການຂຶ້ນຮັບຟັງຄຳສັ່ງສານ ແມ່ນໂອກາດທີ່ທ່ານຈະໄດ້ອະທິບາຍເລື່ອງລາວໃນມຸມມອງຂອງທ່ານ. ຖ້າທ່ານໄດ້ຮັບການແຈ້ງ ແຕ່ທ່ານບໍ່ມາສານ, ສານຈະຕັດສິນວ່າຈະອອກຄຳສັ່ງສານເພື່ອຄຸ້ມຄອງຜູ້ສະເໜີຄຳຮ້ອງ ໂດຍທີ່ບໍ່ຕ້ອງຮັບຟັງຄຳອະທິບາຍຈາກທ່ານ ຫຼື ບໍ່. ຖ້າທ່ານໄດ້ຮັບແຈ້ງກ່ອນການຂຶ້ນສານຕ່ຳກວ່າໄລຍະເວລາ 10 ວັນ, ທ່ານສາມາດສະເໜີສານເລື່ອນໄລຍະເວລາຂຶ້ນສານອອກໄປອີກ ເພື່ອກະກຽມຕົວທ່ານເອງສຳລັບການຂຶ້ນສານ.

ຫາກທ່ານຊາບວ່າ ຄຳສັ່ງສານເພື່ອຄຸ້ມຄອງ ຫຼື ການຮັບຟັງຂອງສານ ບໍ່ຖືກຕ້ອງຕາມທີ່ຜູ້ບັງຄັບໃຊ້ທາງກົດໝາຍບອກທ່ານ, ກະລຸນາຕິດຕໍ່ຫາ ຜູ້ບັງຄັບໃຊ້ທາງກົດໝາຍໃນທ້ອງຖິ່ນທີ່ທ່ານອາໄສຢູ່ ເພື່ອປະສານເອົາສຳເນົາເອກະສານຄຳສັ່ງ. ນອກຈາກນີ້, ທ່ານຍັງສາມາດປະສານຫາສານທີ່ເປັນຜູ້ອອກຄຳສັ່ງສານ ເພື່ອຂໍຂໍ້ມູນເພີ່ມເຕີມ. ເຖິງແມ່ນວ່າທ່ານຍັງບໍ່ທັນໄດ້ຮັບເອກະສານຄຳສັ່ງສານກໍຕາມ, ທ່ານກໍບໍ່ຄວນຕິດຕໍ່ຫາຜູ້ສະເໜີຄຳຮ້ອງ.

## ຂ້າພະເຈົ້າຈະຖືກລົງໂທດທາງອາຍາ ຫຼື ບໍ ເມື່ອບຸກຄົນໃດໜຶ່ງມີຄຳສັ່ງສານທີ່ຈະປົກປ້ອງຜູ້ກ່ຽວຈາກຂ້າພະເຈົ້າ?

ຄຳສັ່ງສານນີ້ເປັນການຄຸ້ມຄອງທາງແພ່ງ ບໍ່ແມ່ນທາງອາຍາ. ສານທີ່ມອບຄຳສັ່ງສານເພື່ອຄຸ້ມຄອງຜູ້ສະເໜີຄຳຮ້ອງ ບໍ່ສາມາດເອົາທ່ານເຂົ້າຄຸກ ຫຼື ປັບໄໝທ່ານໄດ້. ແຕ່ທ່ານຈະຖືກລົງໂທດທາງອາຍາ ຫາກວ່າ:

- ຕຳຫຼວດ ຫຼື ໄອຍະການ ໄດ້ຍື່ນຟ້ອງທ່ານໃນຄະດີອາຍາ, ເຊິ່ງການຟ້ອງນັ້ນຕິດພັນກັບຄວາມຜິດທາງແພ່ງ ແລະ ທ່ານກໍຖືກຕັດສິນໂທດໃນຂໍ້ຫາອາຊະຍາກຳນັ້ນ. ທ່ານຈະໄດ້ຮັບໃບແຈ້ງຂໍ້ກ່າວຫາຕ່າງຫາກ ແລະ ທ່ານສາມາດໂຕ້ແຍ້ງ ຂໍ້ກ່າວຫາທາງອາຍານັ້ນໄດ້.
- ເມື່ອທ່ານບໍ່ປະຕິບັດຕາມຄຳສັ່ງສານເພື່ອຄຸ້ມຄອງຜູ້ສະເໜີຄຳຟ້ອງ, ທ່ານຈະຖືກກ່າວຫາໃນຄະດີອາຍາ"ການລະເມີດຄຳສັ່ງສານ". ຫາກທ່ານຖືກຕັດສິນວ່າຜິດ, ທ່ານຈະຕ້ອງເຂົ້າຄຸກເປັນໄລຍະເວລາສູງສຸດ 1 ປີ ແລະ ຖືກປັບໄໝເປັນເງິນສູງສຸດຈຳນວນ 25,000 ໂດລາສະຫະລັດ.

**ສິ່ງສຳຄັນ:** ທ່ານສາມາດຖືກກ່າວຫາວ່າລະເມີດຄຳສັ່ງສານສຳລັບການຄຸ້ມຄອງໄລຍະສັ້ນ ເຖິງແມ່ນວ່າ ຜູ້ສະເໜີຄຳຮ້ອງບໍ່ໄດ້ຢືນຢັນເຫດການລະເມີດທີ່ເກີດຂຶ້ນລະຫວ່າງການຮັບຟັງຄຳສັ່ງປົກປ້ອງໄລຍະຍາວ. ເຊັ່ນ: ສານອອກຄຳສັ່ງສານເພື່ອຄຸ້ມຄອງຜູ້ສະເໜີຄຳຮ້ອງເພື່ອທີ່ຈະປົກປ້ອງຜູ້ກ່ຽວຈາກທ່ານ; ແລ້ວທ່ານລະເມີດຄຳສັ່ງ ແລະ ຖືກກ່າວຫາວ່າລະເມີດຄຳສັ່ງສານນີ້. ໃນກໍລະນີນີ້, ທ່ານຈະເຂົ້າຮ່ວມຮັບຟັງການພິຈາລະນາຄະດີໃນສານ ແລະ ທ່ານຈະອະທິບາຍເລື່ອງລາວໃນມຸມມອງຂອງທ່ານຕໍ່ສານ. ຫາກສານບໍ່ອອກຄຳສັ່ງເພື່ອຄຸ້ມຄອງໄລຍະຍາວໃຫ້ຜູ້ສະເໜີຄຳຮ້ອງ ທ່ານກໍຍັງຖືວ່າມີຄວາມຜິດໃນການລະເມີດຄຳສັ່ງໄລຍະສັ້ນເຊັ່ນກັນ.

## ຈະເກີດຫຍັງຂຶ້ນ ຖ້າຂ້າພະເຈົ້າມີລູກ?

**ຖ້າທ່ານມີລູກຮ່ວມກັບຜູ້ສະເໜີຄໍາຮ້ອງ** ຄໍາສັ່ງສານເພື່ອຄຸ້ມຄອງອາດຈະປະກອບມີຄໍາສັ່ງກ່ຽວກັບຕາຕະລາງການດູແລເບິ່ງແຍງ, ການແບ່ງການດູແລເບິ່ງແຍງ ແລະ ຄ່າລ້ຽງດູເດັກ.

ຖ້າທ່ານມີຄະດີກ່ຽວກັບການມີສິດໃນຕົວລູກ, ການຢ່າຮ້າງ, ການສິ້ນສຸດການສົມລົດ ຫຼື ການພົວພັນໃນຄະດີແພ່ງອື່ນທີ່ກ່ຽວກັບເດັກ, ໃນກໍລະນີນີ້ ບັນດາຄໍາສັ່ງສານເພື່ອຄຸ້ມຄອງຈາກທ່ານອາດຈະແຕກຕ່າງຈາກບັນດາຄໍາສັ່ງສານໃນຄະດີອື່ນ. ທ່ານຈະຕ້ອງປະຕິບັດຕາມຄໍາສັ່ງສານທີ່ສັ່ງຄຸ້ມຄອງຜູ້ສະເໜີຄໍາຮ້ອງ. ຄໍາສັ່ງສານທີ່ກ່ຽວກັບການຄຸ້ມຄອງນີ້**ຈະສັກສິດກວ່າ**ຄໍາສັ່ງອື່ນໆທີ່ກ່ຽວກັບການມີສິດໃນຕົວບຸດ, ການຢ່າຮ້າງ, ການສິ້ນສຸດການສົມລົດ ແລະ ຄະດີທາງແພ່ງອື່ນໆ.

ຖ້າສານອອກຄໍາສັ່ງສານເພື່ອຄຸ້ມຄອງໄລຍະຍາວ, ສານທີ່ກ່ຽວຂ້ອງກັບການມີສິດໃນຕົວບຸດ, ການຢ່າຮ້າງ, ການສິ້ນສຸດການສົມລົດ ແລະ ຄະດີທາງແພ່ງອື່ນໆ ອາດຈະອະນຸຍາດໃຫ້ທ່ານພົບບຸດຂອງທ່ານໄດ້ໂດຍຕ້ອງມີຄົນອື່ນຢູ່ນໍາ; ສານຈະບອກວິທີທີ່ທ່ານສາມາດພົບບຸດຂອງທ່ານໂດຍທີ່ບໍ່ຕ້ອງມີຄົນອື່ນຢູ່ນໍາໄດ້ ໂດຍປົກກະຕິແລ້ວທ່ານຈະຕ້ອງເຂົ້າຮ່ວມໂປຼແກຼມທີ່ສານກໍານົດໄວ້.

**ເມື່ອທ່ານມີລູກກັບບຸກຄົນອື່ນ.** ພາຍໃຕ້ກົດໝາຍອາລາສກາ, ຖ້າຫາກທ່ານໄດ້ຮັບຄໍາສັ່ງສານໄລຍະຍາວທີ່ປົກປ້ອງຜູ້ອື່ນຈາກທ່ານ, ທ່ານຈະບໍ່ໄດ້ຮັບສິດໃນຕົວບຸດ ຫຼື ແມ້ແຕ່ອອກໄປພົບບຸດໂດຍຕ້ອງມີຄົນອື່ນຢູ່ນໍາ, ເຖິງແມ່ນວ່າ ຜູ້ສະເໜີຄໍາຮ້ອງຈະບໍ່ແມ່ນພໍ່-ແມ່ ຫຼື ຜູ້ປົກຄອງຂອງເດັກກໍຕາມ. ຖ້າກໍລະນີນີ້ເກີດຂຶ້ນ, ສານໃນອີກຄະດີໜຶ່ງທີ່ກ່ຽວຂ້ອງກັບເດັກຈະແຈ້ງວິທີທີ່ທ່ານຈະຂໍຍົກເລີກຂໍ້ຈໍາກັດນີ້. ໂດຍປົກກະຕິແລ້ວ ທ່ານຈະຕ້ອງເຂົ້າຮ່ວມໂປຼແກຼມທີ່ສານກໍານົດໄວ້.

## ຊັບສິນສ່ວນຕົວ ແລະ ສິນສົມສ້າງລະຫວ່າງຂ້າພະເຈົ້າ ແລະ ຜູ້ສະເໜີຄໍາຮ້ອງ ຈະເຮັດແນວໃດ?

ຄໍາສັ່ງສານເພື່ອຄຸ້ມຄອງ ອາດຈະມີຄໍາສັ່ງມອບຊັບສິນ, ສິນສົມສ້າງຊົ່ວຄາວໃຫ້ແກ່ຜູ້ສະເໜີຄໍາຮ້ອງ ເຊັ່ນ: ເຮືອນ, ສັດລ້ຽງ, ລົດ ແລະ ເຄື່ອງຂອງສ່ວນຕົວ. ຄໍາສັ່ງສານເພື່ອຄຸ້ມຄອງປະກອບມີ "ກໍລະນີຄໍາສັ່ງໃນການໃຫ້ຄວາມຊ່ວຍເຫຼືອ" ແລະ ສໍາລັບກໍລະນີນີ້, ສານອາດຈະອອກຄໍາສັ່ງໃຫ້ ຜູ້ບັງຄັບໃຊ້ກົດໝາຍປະຕິບັດ ຄື:

- ຊ່ວຍຜູ້ສະເໜີຄໍາຮ້ອງໃນການເອົາບັນດາເຄື່ອງຂອງທີ່ໄດ້ຂຽນໄວ້ໃນຄໍາສັ່ງສານເພື່ອຄຸ້ມຄອງ, ທ່ານຈະຕ້ອງມອບສິ່ງຂອງເຫຼົ່ານັ້ນ ໂດຍບໍ່ຂຶ້ນກັບວ່າສິ່ງຂອງເປັນຂອງທ່ານ ຫຼື ບໍ່ໃຫ້ແກ່ຜູ້ສະເໜີຄໍາຮ້ອງຈົນກວ່າຄໍາສັ່ງຈະສິ້ນສຸດ ຫຼື ມີການປ່ຽນແປງ.
- ຊ່ວຍທ່ານໃນການໄປເອົາເຄື່ອງຂອງທ່ານຈາກບ້ານທີ່ອາໄສຢູ່ຮ່ວມກັນ. ກະລຸນາຕິດຕໍ່ຂໍຄວາມຊ່ວຍເຫຼືອກັບຜູ້ບັງຄັບໃຊ້ກົດໝາຍໃນເວລາກາງເວັນ, ເຊິ່ງເປັນເວລາທີ່ເຈົ້າໜ້າທີ່ບໍ່ມີວຽກຫຼາຍ. ກ່ອນທີ່ຈະໄປ, ກະລຸນາວາງແຜນວ່າສິ່ງໃດທີ່ສໍາຄັນທີ່ສຸດທີ່ທ່ານຄິດວ່າຈໍາເປັນ. ທ່ານຈະມີເວລາພຽງແຕ່ 15 ນາທີ ໃນການເກັບເຄື່ອງ. ຫາກຜູ້ສະເໜີຢູ່ເຮືອນ, ກະລຸນາຢ່າສົນທະນາກັບພວກເຂົາ ແລະ ຫາກທ່ານມີຄໍາຖາມ ໃຫ້ຖາມເຈົ້າໜ້າທີ່. ເຈົ້າໜ້າທີ່ຈະບໍ່ອະນຸຍາດໃຫ້ທ່ານນໍາສິ່ງຂອງທີ່ຜູ້ສະເໜີຄໍາຮ້ອງຄັດຄ້ານຕິດຕົວໄປເດັດຂາດ.

ຖ້າສານຍັງບໍ່ໄດ້ສັ່ງໃຫ້ຜູ້ບັງຄັບໃຊ້ກົດໝາຍຊ່ວຍທ່ານໃນການໄປເອົາສິ່ງຂອງ (ຫຼື ທ່ານຢາກຈະກັບໄປເອົາເຄື່ອງອີກຮອບໜຶ່ງ), ທ່ານສາມາດຮ້ອງຂໍໃຫ້ສານຊ່ວຍໄດ້. ກະລຸນາອ່ານບັນດາຄໍາຖາມຕ່າງໆຂ້າງລຸ່ມນີ້ ຫາກທ່ານຕ້ອງການປ່ຽນແປງຄໍາສັ່ງສານ.

## ເມື່ອຂ້າພະເຈົ້າບໍ່ເຫັນດີຕໍ່ຄຳສັ່ງສານເພື່ອຄຸ້ມຄອງ ຂ້າພະເຈົ້າຄວນເຮັດແນວໃດ?

ຖ້າຫາກມີຄຳສັ່ງສານເພື່ອຄຸ້ມຄອງຜູ້ສະເໜີຄຳຮ້ອງຈາກທ່ານໃນໄລຍະສັ້ນ (20 ວັນ), ທ່ານມີ 2 ທາງເລືອກ ຄື:

1. ຂໍປ່ຽນແປງ ຫຼື ສິ້ນສຸດ ຄຳສັ່ງປົກປ້ອງໄລຍະສັ້ນໄດ້ (ກະລຸນາເບິ່ງຄຳຖາມຕໍ່ໄປ).
2. ຖ້າມີຕາຕະລາງນັດໃຫ້ເຂົ້າຮັບຟັງຄຳສັ່ງໄລຍະຍາວ, ກະລຸນາປະຕິບັດຕາມຄຳສັ່ງປົກປ້ອງໄລຍະສັ້ນຈົນກວ່າຈະຮອດມື້ຮັບຟັງຄະດີ , ແລ້ວທ່ານສາມາດບອກຕໍ່ສານກ່ຽວກັບເລື່ອງລາວທີ່ເກີດຂຶ້ນຈາກມຸມມອງຂອງທ່ານ.

ຖ້າຫາກມີຄຳສັ່ງສານເພື່ອຄຸ້ມຄອງຜູ້ສະເໜີຄຳຮ້ອງຈາກທ່ານໃນໄລຍະຍາວ ທ່ານສາມາດຂໍປ່ຽນແປງ ຫຼື ສິ້ນສຸດ ຄຳສັ່ງປົກປ້ອງໄລຍະຍາວໄດ້ (ກະລຸນາເບິ່ງຄຳຖາມຕໍ່ໄປ).

## ຫາກຂ້າພະເຈົ້າຕ້ອງການໃຫ້ສານປ່ຽນແປງ ຫຼື ສິ້ນສຸດ ຄຳສັ່ງສານເພື່ອຄຸ້ມຄອງຈະເຮັດແນວໃດ?

ພາຍຫຼັງທີ່ສານອອກຄຳສັ່ງສານເພື່ອຄຸ້ມຄອງ, ທ່ານສາມາດຂໍໃຫ້ສານ ປະຕິບັດດັ່ງນີ້:

- ປ່ຽນ (ແກ້ໄຂ) ຄຳສັ່ງ, ເຊິ່ງໝາຍຄວາມວ່າຄຳສັ່ງຈະຍັງມີຢູ່ ແຕ່ທ່ານພຽງຕ້ອງການປ່ຽນແປງເງື່ອນໄຂບາງຢ່າງເທົ່ານັ້ນ ເຊັ່ນວ່າ ທ່ານຕ້ອງການປ່ຽນຕາຕະລາງໃນການເບິ່ງແຍງເດັກ ຫຼື ທ່ານຕ້ອງການ ປຶກສາຫາລືທາງດ້ານການເງິນກັບຜູ້ສະເໜີຄຳຮ້ອງໂດຍມີຂໍ້ຈຳກັດ ໃຫ້ໃຊ້ແບບຟອມຄຳຮ້ອງ*ຂໍແກ້ໄຂຄຳສັ່ງ* (ຟອມDV-131 ຫຼື DV-131M).
- ສິ້ນສຸດ (ຍຸຕິ) ຄຳສັ່ງ, ເຊິ່ງໝາຍຄວາມວ່າເປັນການຍົກເລີກຄຳສັ່ງທັງໝົດ. ຫາກຜູ້ສະເໜີຄຳຮ້ອງບໍ່ເຫັນດີຕໍ່ການສະເໜີນີ້ , ທ່ານຈະຕ້ອງພິສູດວ່າມີການປ່ຽນແປງຢ່າງຫຼວງຫຼາຍຕັ້ງແຕ່ສານໄດ້ອອກຄາສັ່ງຄຸ້ມຄອງ ສານຈະບໍ່ຈັດໃຫ້ມີການຮັບຟັງຄະດີອີກ ໃຫ້ໃຊ້ແບບຟອມຄຳຮ້ອງ *ຂໍສິ້ນສຸດຄຳສັ່ງ* (ຟອມ DV-133 ຫຼື DV-133M).

ທ່ານສາມາດເຂົ້າໄປຂໍຮັບແບບຟອມເອກະສານໄດ້ທີ່ຫ້ອງການສານ ແລະ ສາມາດດາວໂຫຼດເອກະສານໄດ້ທີ່ເວັບໄຊຕ໌: ak-courts.info/dvforms.

ຫາກທ່ານຕ້ອງການປ່ຽນແປງ ຫຼື ສິ້ນສຸດ ຄຳສັ່ງໄລຍະສັ້ນ, ສານຈະໃຫ້ມີການຮັບຟັງຄະດີພາຍໃນໄລຍະເວລາ 72 ຊົ່ວໂມງ. ຫາກທ່ານຕ້ອງການປ່ຽນແປງ ຫຼື ສິ້ນສຸດ ຄຳສັ່ງໄລຍະຍາວ, ສານຈະສັ່ງໃຫ້ມີການຮັບຟັງຄະດີພາຍໃນໄລຍະເວລາ 2 ຫາ 4 ອາທິດ. ທ່ານຈະຕ້ອງໄປສານເພື່ອຮັບຟັງຄະດີ ຖ້າທ່ານບໍ່ໄປ, ຄຳຂໍຂອງທ່ານຈະຖືກປະຕິເສດ.

ກະລຸນາແຈ້ງຂໍ້ມູນຕິດຕໍ່ທີ່ທ່ານໃຊ້ໃນປະຈຸບັນ (ໂດຍສະເພາະເບີໂທລະສັບ ແລະ ອີເມວ) ເພື່ອເປັນການສະດວກຕໍ່ສານໃນການແຈ້ງໃຫ້ທ່ານມາຮັບຟັງການພິຈາລະນາຄະດີ ກະລຸນາຖາມພະນັກງານສານ, ຫາກທ່ານຕ້ອງການໃຫ້ຂໍ້ມູນຕິດຕໍ່ຂອງທ່ານເປັນຄວາມລັບຕໍ່ຜູ້ສະເໜີຄຳຮ້ອງ.

**ສິ່ງສຳຄັນ:** ຖ້າສານບໍ່ມີຄຳສັ່ງປ່ຽນແປງ ຫຼື ສິ້ນສຸດ ຄຳສັ່ງສານເພື່ອຄຸ້ມຄອງ, ກະລຸນາປະຕິບັດຕາມຄຳສັ່ງນັ້ນ. ຫາກຄຳສັ່ງສານເພື່ອຄຸ້ມຄອງຂອງຄະດີແພ່ງ ມີການປ່ຽນແປງ ຫຼື ສິ້ນສຸດ, ຄຳສັ່ງຄຸ້ມກັນໃນຄະດີອາຍາທີ່ກ່ຽວຂ້ອງກັບຄະດີດຽວກັນ ກໍຈະ**ບໍ່**ປ່ຽນແປງ. ຫາກຄະດີອາຍາຖືກຍົກເລີກ ຫຼື ຄະດີອາຍາທີ່ມີຄຳສັ່ງຫ້າມຕິດຕໍ່ ມີການປ່ຽນແປງ, ກໍຈະ**ບໍ່**ມີການປ່ຽນແປງຄຳສັ່ງໃນຄະດີແພ່ງ. ຖ້າວ່າ ຄຳສັ່ງໃດໜຶ່ງມີການປ່ຽນແປງ ຫຼື ສິ້ນສຸດ, ທ່ານກໍຍັງຕ້ອງປະຕິບັດຕາມຄຳສັ່ງທີ່ເຫຼືອຢູ່. **ຫ້າມຕິດຕໍ່ພົວພັນຫາຜູ້ສະເໜີຄຳຮ້ອງ ເວັ້ນເສຍແຕ່ບໍ່ມີຄຳສັ່ງໃດອື່ນອີກ.**

## ມີກົດໝາຍຂອງລັດຖະບານກາງທີ່ຂ້າພະເຈົ້າຄວນຮູ້ບໍ?

ພາຍໃຕ້ກົດໝາຍສະບັບທີ 18 USC § 922(g)(8), ທ່ານຈະບໍ່ໄດ້ຮັບອະນຸຍາດໃຫ້ຄອບຄອງອາວຸດປືນ ຫາກວ່າທ່ານເຄີຍໄດ້ຖືກຄຳສັ່ງສານເພື່ອຄຸ້ມຄອງຄວາມຮຸນແຮງພາຍໃນຄອບຄົວໄລຍະຍາວມາກ່ອນ. ກົດໝາຍສະບັບນີ້ອາດຈະກ່ຽວຂ້ອງກັບທ່ານ ຫຼື ບໍ່ ກໍໄດ້ ຂຶ້ນກັບຄວາມສຳພັນລະຫວ່າງທ່ານ ແລະ ຜູ້ສະເໜີຄຳຮ້ອງ; ຫຼື ການຕັດສິນບາງຢ່າງຂອງສານທີ່ກ່ຽວກັບຄຳສັ່ງຄຸ້ມຄອງນັ້ນ. ກົດໝາຍສະບັບນີ້ຈະບໍ່ຖືກນຳໃຊ້ເຂົ້າໃນ ຄຳສັ່ງຄຸ້ມຄອງແບບເລັ່ງດ່ວນ ຫຼື ຄຳສັ່ງສານເພື່ອຄຸ້ມຄອງໄລຍະສັ້ນ.

## ອາຊະຍາກຳກ່ຽວກັບຄວາມຮຸນແຮງພາຍໃນຄອບຄົວ

**ອາຊະຍາກຳຄວາມຮຸນແຮງພາຍໃນຄອບຄົວ ມີຄື:**

- ການກໍ່ເຫດ ຫຼື ພະຍາຍາມກໍ່ອາຊະຍາກຳ; ແລະ
- ການກໍ່ເຫດອາຊະຍາກຳຂອງບຸກຄົນ ຕໍ່ບຸກຄົນນັ້ນ ເຊິ່ງເປັນສະມາຊິກໃນຄອບຄົວ; ແລະ
- ການກໍ່ອາຊະຍາກຳ ທີ່ລະບຸໄວ້ຢູ່ໃນກົດໝາຍອາລາສກາ ຫຼື ການລະເມີດກົດໝາຍທີ່ຄ້າຍຄືກັນກັບກົດໝາຍຂອງເມືອງ ແລະ ລັດອື່ນໆ.

**ຄວາມໝາຍຂອງຄຳວ່າ "ສະມາຊິກຄອບຄົວ" ລະບຸຢູ່ໃນກົດໝາຍອາລາສກາ ວ່າດ້ວຍຄວາມຮຸນແຮງພາຍໃນຄອບຄົວ ມີຄື:**

(1) ຜູ້ໃຫຍ່ ຫຼື ເດັກນ້ອຍ ທີ່ມີລັກສະນະດັ່ງນີ້:

- ເປັນຜົວ-ເມຍ ຫຼື ເຄີຍເປັນຜົວ-ເມຍ
- ອາໄສຢູ່ນຳກັນ ຫຼື ເຄີຍອາໄສຢູ່ນຳກັນ
- ມີການສຳພັນທາງກາຍ (ຫຼື ເຄີຍມີເພດສຳພັນຮ່ວມກັນ)
- ມີສາຍພົວພັນທາງສາຍເລືອດ ຫຼື ຮັບເຂົ້າມາເປັນສະມາຊິກໃນຄອບຄົວຢ່າງຖືກກົດໝາຍ
- ແຕ່ງດອງ ຫຼື ເຄີຍແຕ່ງດອງກັນມາກ່ອນ
- ມີລູກນຳກັນ

(2) ເດັກ ທີ່ມີສາຍພົວພັນກັບບຸກຄົນທີ່ກ່າວເຖິງໃນຂໍ້ (1).

**ລາຍການຄະດີອາຊະຍາກຳກ່ຽວກັບຄວາມຮຸນແຮງພາຍໃນຄອບຄົວ ມີຄື:**

**ການທຳຮ້າຍຮ່າງກາຍ** ເກີດຂຶ້ນເມື່ອບຸກຄົນໜຶ່ງ ເຮັດບຸກຄົນອື່ນໄດ້ຮັບບາດເຈັບທາງກາຍ; ຫຼື ບຸກຄົນໜຶ່ງຂົ່ມຂູ່ຈົນເຮັດໃຫ້ບຸກຄົນອື່ນໄດ້ຮັບບາດເຈັບທາງກາຍ ແລະ ກະທຳການຂົ່ມຂູ່ໂດຍບໍ່ໄດ້ວາງແຜນໄວ້ກ່ອນ. ຖ້າມີການຂົ່ມຂູ່ເກີດຂຶ້ນ, ທ່ານສາມາດຂໍຄຳສັ່ງຄຸ້ມຄອງ ເຖິງແມ່ນວ່າ ຜູ້ຖືກກ່າວຫາ ຍັງບໍ່ທັນໄດ້ທຳຮ້າຍຮ່າງກາຍທ່ານຈົນໄດ້ຮັບບາດເຈັບກໍຕາມ.

**ການລັກລອບວາງເພີງ ຫຼື ການຈູດເຜົາທຳລາຍໂດຍປະໝາດ** ເກີດຂຶ້ນເມື່ອບຸກຄົນໜຶ່ງ ທຳລາຍຊັບສິນຂອງບຸກຄົນອື່ນ ໂດຍການຈູດເຜົາທຳລາຍ ຫຼື ການລະເບີດ ຫຼື ການທຳລາຍຊັບສິນຂອງຜູ້ກ່ຽວເອງ ໂດຍເຮັດໃຫ້ບຸກຄົນອື່ນໄດ້ຮັບອັນຕະລາຍຈົນມີການບາດເຈັບສາຫັດ.

**ການບຸກລຸກ** ເກີດຂຶ້ນເມື່ອບຸກຄົນໜຶ່ງວາງແຜນເຂົ້າໄປໃນອາຄານ ເພື່ອກະທຳການທີ່ຜິດກົດໝາຍ.

**ການທຳລາຍຊັບສິນທາງອາຍາ** ເກີດຂຶ້ນເມື່ອບຸກຄົນໜຶ່ງທຳລາຍຊັບສິນຂອງບຸກຄົນອື່ນໂດຍເຈດຕະນາ. ການທຳລາຍຊັບສິນທາງອາຍາຍັງເກີດຂຶ້ນໄດ້ ຖ້າບຸກຄົນດັ່ງກ່າວ ຮ່ວມກັນເປັນເຈົ້າຂອງຊັບສິນທີ່ເສຍຫາຍ.

**ການບຸກລຸກທາງອາຍາ** ເກີດຂຶ້ນເມື່ອບຸກຄົນໜຶ່ງວາງແຜນເຂົ້າໄປໃນດິນ, ບ້ານ ແລະ ພາຫະນະ ເພື່ອກະທຳການທີ່ຜິດກົດໝາຍ.

**ການໃຊ້ຄວາມຮຸນແຮງຕໍ່ສັດລ້ຽງ** ເກີດຂຶ້ນເມື່ອບຸກຄົນໜຶ່ງກະທຳການຂ້າສັດລ້ຽງ ຫຼື ເຮັດໃຫ້ສັດລ້ຽງໄດ້ຮັບບາດເຈັບ ເພື່ອໃຊ້ໃນການຄຸກຄາມ, ຂົ່ມຂູ່ ຫຼື ຄຸກຄາມບຸກຄົນອື່ນ.

**ການແຊກແຊງການເບິ່ງແຍງດູແລ** ເກີດຂຶ້ນເມື່ອໜຶ່ງໃນສະມາຊິກຄອບຄົວ ຄອບຄອງເດັກໂດຍບໍ່ຖືກຕ້ອງຕາມກົດໝາຍ **ແລະ** ບຸກຄົນນັ້ນ ຍັງເກັບເດັກໄວ້ໃນຄອບຄອງໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ເປັນໄລຍະເວລາຍາວນານ ຈາກຜູ້ປົກຄອງທີ່ຖືກຕ້ອງຕາມກົດໝາຍຂອງເດັກ. ຕົວຢ່າງວ່າ: ຜູ້ປົກຄອງ ພາເດັກອອກໄປຈາກລັດໂດຍບໍ່ຖືກຕ້ອງຕາມກົດໝາຍ ເພື່ອເຮັດໃຫ້ເດັກຫ່າງຈາກຜູ້ປົກຄອງອີກຄົນໜຶ່ງເປັນໄລຍະເວລາຍາວນານ. ກໍລະນີທີ່**ບໍ່ແມ່ນ**ການແຊກແຊງການເບິ່ງແຍງລ້ຽງດູ ເມື່ອເກີດເຫດການທີ່ຜູ້ປົກຄອງນຳເດັກມາສົ່ງໃຫ້ ຜູ້ປົກຄອງອີກຄົນໜຶ່ງ ຊ້າກວ່າເວລາທີ່ຕົກລົງກັນໄວ້.

**ການຂົ່ມຂູ່ເພື່ອຊິງຊັບ ແລະ ການບີບບັງຄັບ** ສ່ວນຫຼາຍເອີ້ນວ່າ ການຂົ່ມຂູ່ (ແບ໊ກເມວ), ເຊິ່ງກໍລວມທັງການທໍາຮ້າຍຮ່າງກາຍບຸກຄົນອື່ນຈົນໄດ້ຮັບບາດເຈັບ; ຫຼື ການທໍາຮ້າຍບຸກຄົນອື່ນເພື່ອຊິງຊັບ; ຫຼື ການຂົ່ມຂູ່ໃຫ້ບຸກຄົນອື່ນເຮັດໃນສິ່ງທີ່ຕົນເອງຕ້ອງການໂດຍບໍ່ສະໝັກໃຈ. ຕົວຢ່າງວ່າ: ບຸກຄົນໜຶ່ງຂົ່ມຂູ່ວ່າຈະໂພສຮູບພາບ ຫຼື ວິດີໂອ ລົງໃນຊ່ອງທາງອອນໄລນ໌ (ອິນເຕີເນັດ) ເພື່ອຮຽກຮ້ອງເອົາເງິນຈາກທ່ານ.

**ການຄຸກຄາມ ຫຼື ການລ່ວງລະເມີດ** ໝາຍເຖິງ ເມື່ອຜູ້ໃດຜູ້ໜຶ່ງ ມີຈຸດປະສົງຈະຄຸກຄາມ ຫຼື ກະທໍາການອື່ນໆເພື່ອເປັນການລົບກວນຄົນອື່ນ ເປັນຕົ້ນແມ່ນ:

- ໂທລົບກວນຜ່ານລະບົບສັນຍານໂທລະສັບ ແລະ ບໍ່ວາງສາຍ, ຈົນເຮັດໃຫ້ບຸກຄົນອື່ນບໍ່ສາມາດໂທ ຫຼື ຮັບໂທລະສັບຈາກບຸກຄົນທີ່ສາມໄດ້; ຫຼື
- ໂທລະສັບຫາບຸກຄົນອື່ນຊໍ້າໆ ໃນເວລາທີ່ບໍ່ສົມຄວນ; ຫຼື
- ໂທຫາ ຫຼື ທໍາການພະຍາຍາມສື່ສານທຸກຮູບແບບຜ່ານທາງລະບົບອີເລັກໂທຣນິກທີ່ບໍ່ເປີດເຜີຍຊື່ ຫຼື ສະແດງຄວາມລາມົກອານາຈານ, ທີ່ອາດເປັນໄພຂົ່ມຂູ່ຕໍ່ການບາດເຈັບທາງດ້ານຮ່າງກາຍ ຫຼື ການທີ່ປາກຈະສື່ສານທາງເພດ ຫຼື
- ເຜີຍແຜ່ ຫຼື ແຈກຢາຍຮູບພາບ ຫຼື ວິດີໂອທີ່ສະແດງໃຫ້ເຫັນອະໄວຍະວະເພດຂອງຄົນອື່ນ, ຮູທະວານ ຫຼື ເຕົ້ານົມຂອງແມ່ຍິງ ຫຼື ກິດຈະກໍາທາງເພດຂອງບຸກຄົນອື່ນ.

**ການລັກພາຕົວ**: ແມ່ນການທີ່ບຸກຄົນໜຶ່ງ ກັກຂັງ ຫຼື ລັກພາໂຕອີກບຸກຄົນອື່ນ ທີ່ຂັດກັບຈຸດປະສົງຂອງຜູ້ນັ້ນ. ໂດຍທົ່ວໄປແລ້ວ, ມັນຍັງໝາຍຄວາມວ່າບຸກຄົນນັ້ນກໍາລັງວາງແຜນທີ່ຈະທໍາຮ້າຍຮ່າງກາຍ ຫຼື ລ່ວງລະເມີດທາງເພດເພື່ອມີເພດສໍາພັນກັບບຸກຄົນອື່ນ, ສ້າງຄວາມສ່ຽງອັນໃຫຍ່ຫຼວງທີ່ຄົນອື່ນຈະໄດ້ຮັບບາດເຈັບສາຫັດ ຫຼື ທໍາການປິດບັງຄົນອື່ນເພື່ອບໍ່ສາມາດໃຫ້ຄົ້ນພົບໄດ້.

**ການປະໝາດຈົນເຮັດໃຫ້ບຸກຄົນອື່ນໄດ້ຮັບອັນຕະລາຍ:** ເກີດຂຶ້ນເມື່ອການກະທໍາບຸກຄົນໜຶ່ງ **ເຮັດໃຫ້ບຸກຄົນອື່ນໄດ້ຮັບບາດເຈັບສາຫັດ.** ຕົວຢ່າງວ່າ: ຫາກທ່ານກໍາລັງຂັບລົດຢູ່ເທິງທາງດ່ວນ ແລ້ວມີຜູ້ໂດຍສານທີ່ນັ່ງມານໍາພະຍາຍາມຍາດຈັບພວງມາໄລລົດທ່ານຈົນເຮັດໃຫ້ລົດເສຍຫຼັກອອກຈາກຫົນທາງ ຈົນເຮັດໃຫ້ເກີດອຸປະຕິເຫດທາງລົດຢ່າງຮ້າຍແຮງແກ່ທ່ານ.

**ການປຸ້ນຈີ້** ເກີດຂຶ້ນເມື່ອບຸກຄົນໃດໜຶ່ງບັງຄັບ ຫຼື ບັງຄັບຂົ່ມຂູ່ ເພື່ອຈີ້ເອົາເງິນ ຫຼື ຊັບສິນ ຂອງບຸກຄົນອື່ນ. ເງິນ ຫຼື ຊັບສິນ ຈະຕ້ອງຢູ່ໃກ້ກັບເຈົ້າຂອງສັບສິນ ເມື່ອເກີດມີການປຸ້ນຈີ້ເກີດຂຶ້ນ.

**ອາຊະຍາກໍາທາງເພດ** ລວມທັງຮູບແບບຂອງການລ່ວງລະເມີດທາງເພດ, ການຄຸກຄາມທາງເພດຕໍ່ເດັກ, ການຮ່ວມເພດທີ່ບໍ່ເໝາະສົມ ແລະ ການສໍາຜັດທີ່ບໍ່ເໝາະສົມ. ການຄຸກຄາມທາງເພດ ຍັງສາມາດເກີດຂຶ້ນໄດ້ກັບຄູ່ຜົວ-ເມຍ. ອາຊະຍາກໍາທີ່ກ່ຽວຂ້ອງກັບຮູບພາບລາມົກຂອງຜູ້ເຍົາ ກໍແມ່ນໜຶ່ງໃນອາຊະຍາກໍາທາງເພດ, ແຕ່ບໍ່ໄດ້ລວມໃນອາຊະຍາກໍາທີ່ກ່ຽວຂ້ອງກັບຮູບລາມົກອື່ນໆທົ່ວໄປ.

**ການສະກົດຮອຍຕາມ** ເກີດຂຶ້ນເມື່ອບຸກຄົນໜຶ່ງຕິດຕໍ່ກັບບຸກຄົນອື່ນໂດຍບໍ່ໄດ້ຮັບການຍິນຍອມ ແລະ ການກະທໍາແບບນີ້ ກໍເຮັດໃຫ້ຜູ້ທີ່ຖືກກະທໍາມີຄວາມຮູ້ສຶກວ່າຈະໄດ້ຮັບບາດເຈັບ ຫຼື ເຖິງແກ່ຊີວິດ.

**ການຄຸກຄາມດ້ວຍການກໍ່ການຮ້າຍ** ເກີດຂຶ້ນເມື່ອບຸກຄົນໜຶ່ງທໍາການຂົ່ມຂູ່ເອົາຊີວິດຕໍ່ບຸກຄົນອື່ນ ຈົນເຮັດໃຫ້ບຸກຄົນນັ້ນເກີດຄວາມຢ້ານກົວວ່າຈະໄດ້ຮັບບາດເຈັບ. ຕົວຢ່າງວ່າ: ມີຄົນໂທລະສັບຫາທ່ານ ແລະ ຂົ່ມຂູ່ວ່າຈະຍິງປືນໃສ່ທ່ານຕອນທີ່ທ່ານກໍາລັງຈະອອກຈາກບ້ານ. ເປັນອາຊະຍາກໍາ ຈົນເຮັດໃຫ້ທ່ານຕ້ອງອົບພະຍົບອອກຈາກອາຄານ ສະຖານທີ່ພັກອາໄສ ລວມທັງການສ້າງຄວາມເດືອດຮ້ອນແກ່ບຸກຄົນອື່ນໆ.

**ການລະເມີດຄໍາສັ່ງຄຸ້ມຄອງ** ເກີດຂຶ້ນເມື່ອບຸກຄົນໜຶ່ງກະທໍາສິ່ງທີ່ຖືກຫ້າມຕໍ່ບຸກຄົນອື່ນ ເຊັ່ນ: ຄໍາສັ່ງຄຸ້ມຄອງຈາກການໃຊ້ຄວາມຮຸນແຮງພາຍໃນຄອບຄົວ, ການສະກົດຮອຍຕາມ ແລະ ການຄຸກຄາມທາງເພດ.